# ສປປ ລາວ 2023

## HIV & ພຶດຕິກຳທາງເພດ

# ການສຳຫຼວດດັດສະນີໝາຍສັງຄົມລາວ

### ຕົວຊີ້ບອກ HIV

ແມ່ຍິງ | ຜູ້ຊາຍ

## ຄວາມຮູ້

ອັດຕາສ່ວນຮ້ອຍຂອງຜູ້ທີ່ຮູ້ສອງວິທີຂອງການປ້ອງກັນໂລກເອດສ (ມີຄູ່ນອນທີ່ຊື່ສັດຜູ້ດຽວທີ່ບໍ່ຕິດເຊື້ອ ແລະ ໃຊ້ຖົງຢາງອະນາໄມທຸກຄັ້ງເວລາມີເພດສຳພັນ), ຜູ້ທີ່ຮູ້ວ່າ ຄົນທີ່ເບິ່ງຄືມີສຸຂະພາບແຂງແຮງດີ ອາດເປັນຄົນທີ່ຕິດເຊື້ອ HIV ໄດ້, ແລະ ຜູ້ທີ່ປະຕິເສດຄວາມເຂົ້າໃຈຜິດທີ່ພົບເລື້ອຍທີ່ສຸດ 2 ປະການ.







## ການຈຳແນກລັງກຽດ

ອັດຕາສ່ວນຮ້ອຍຂອງຜູ້ທີ່ລາຍງານວ່າມີທັດສະນະທີ່ຈຳແນກຕໍ່ຜູ້ຕິດເຊື້ອເອສໄອວີ ລວມທັງ 1) ຈະບໍ່ຊື້ຜັກສົດຈາກເຈົ້າຂອງຮ້ານ ຫຼື ຜູ້ຂາຍທີ່ຕິດເຊື້ອເອສໄອວີ ແລະ 2) ຄິດວ່າເດັກນ້ອຍທີ່ຕິດເຊື້ອເອສໄອວີບໍ່ຄວນໄດ້ຮັບອະນຸຍາດໃຫ້ເຂົ້າໂຮງຮຽນຮ່ວມກັບເດັກນ້ອຍທີ່ບໍ່ຕິດເຊື້ອ HIV







## ການກວດ HIV

ອັດຕາສ່ວນຮ້ອຍຂອງຜູ້ທີ່ໄດ້ກວດ HIV ໃນ 12 ເດືອນຜ່ານມາ ແລະ ຮູ້ຜົນກວດ







## ການກວດ HIV ໃນເວລາດູແລກ່ອນເກີດ

ອັດຕາສ່ວນຮ້ອຍຂອງແມ່ຍິງໃນເວລາມາຮັບການບໍລິການດູແລກ່ອນເກີດໃນໄລຍະຖືພາຄັ້ງຫຼ້າສຸດຂອງເຂົາເຈົ້າໄດ້ຖືກສະເໜີໃຫ້ກວດເອສໄອວີ, ໄດ້ຍອມຮັບກວດ ແລະ ໄດ້ຮັບຜົນກວດ, ແລະໄດ້ຮັບຂໍ້ມູນຂ່າວສານສຸຂະສຶກສາ ຫຼື ຄຳປຶກສາກ່ຽວກັບເອສໄອວີ ຫຼັງຈາກກວດ.




## ຂໍ້ຄວາມທີ່ສຳຄັນ

- ແມ່ຍິງ 2 ໃນ 10 ຄົນທີ່ມີອາຍຸ 15-49 ປີ (20%) ຮູ້ສອງວິທີການປ້ອງກັນພະຍາດເອດສ໌, ໃນຂະນະທີ່ຄວາມຮູ້ຂອງຜູ້ຊາຍແມ່ນສູງກວ່າເລັກນ້ອຍ; ຢູ່ທີ່ 23%.
- ເກືອບ 1 ໃນ 5 ຜູ້ຊາຍໜຸ່ມ (18%), ເຊັ່ນດຽວກັນກັບຍິງໜຸ່ມ (20%) ອາຍຸ 15-24 ປີ, ຮູ້ສອງວິທີຂອງການປ້ອງກັນໂລກເອດສ.
- ເກືອບ 1 ໃນ 2 ແມ່ຍິງ (49%) ແລະ ຜູ້ຊາຍ (52%) ອາຍຸ 15-49 ປີລາຍງານວ່າມີທັດສະນະຄະຕິທີ່ບໍ່ດີຕໍ່ຜູ້ຕິດເຊື້ອເອດສ.
- ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-24 ປີ ແລະ ອາຍຸ 15-49 ປີ ລາຍງານວ່າເຂົາເຈົ້າໄດ້ກວດ HIV ໃນ 12 ເດືອນຜ່ານມາ ແລະ ຮູ້ຜົນກວດແມ່ນ 1.2% ແລະ 1% ຕາມລຳດັບ. ພຽງແຕ່ 0.3% ຂອງທັງສອງກຸ່ມອາຍຸ, 15-24 ແລະ 49 ປີ, ລາຍງານວ່າພວກເຂົາໄດ້ກວດ HIV ໃນ 12 ເດືອນທີ່ຜ່ານມາ ແລະ ຮູ້ຜົນກວດ.
- 6% ຂອງແມ່ຍິງອາຍຸ 15-49 ປີ ໃນໄລຍະທີ່ມາຮັບການບໍລິການດູແລກ່ອນເກີດ ສຳລັບການຖືພາຄັ້ງຫຼ້າສຸດຂອງເຂົາເຈົ້າໄດ້ຖືກສະເໜີໃຫ້ກວດເອສໄອວີ, ໄດ້ຍອມຮັບເຮັດການກວດ ແລະ ໄດ້ຮັບຜົນກວດ, ແລະໄດ້ຮັບຂໍ້ມູນຂ່າວສານສຸຂະສຶກສາ ຫຼື ຄຳປຶກສາກ່ຽວກັບເອສໄອວີ ຫຼັງຈາກກວດ.

## ຕົວຊີ້ບອກ HIV ຕາມລັກສະນະຕ່າງໆ

### ຄວາມຮູ້ໃນກຸ່ມເດັກໄວຈະເລີນພັນ ແລະ ຍິງໜຸ່ມ (15-24)*




### ຄວາມຮູ້ໃນກຸ່ມເດັກໄວຈະເລີນພັນຊາຍ ແລະ ຊາຍໜຸ່ມ (15-24)*




*ອັດຕາສ່ວນຮ້ອຍຂອງຄົນທີ່ມີ ອາຍຸ 15-24 ປີ ຜູ້ທີ່ຮູ້ສອງວິທີຂອງການປ້ອງກັນໂລກເອດສ, ຜູ້ທີ່ຮູ້ວ່າ ຄົນທີ່ເບິ່ງຄືເປັນຄົນມີສຸຂະພາບແຂງແຮງດີ ອາດເປັນຄົນທີຕິດເຊື້ອ HIV ໄດ້, ແລະ ຜູ້ທີ່ປະຕິເສດຄວາມເຂົ້າໃຈຜິດທີ່ພົບເລື້ອຍທີ່ສຸດ 2 ປະການ..

### ການກວດ HIV ໃນ 12 ເດືອນຜ່ານມາ




ອັດຕາສ່ວນຮ້ອຍຄົນອາຍຸ 15-49 ປີທີ່ໄດ້ກວດ HIV ໃນ 12 ເດືອນຜ່ານມາ ແລະ ຮູ້ຜົນກວດ, ແຍກຕາມກຸ່ມອາຍຸ

### ຕົວເລກຂັ້ນແຂວງກ່ຽວກັບການກວດ HIV

| ແຂວງ | ຜູ້ຊາຍທີ່ໄດ້ກວດHIV ໃນ 12 ເດືອນຜ່ານມາ | ຜູ້ຍິງທີ່ໄດ້ກວດHIV ໃນ 12 ເດືອນຜ່ານມາ | ແມ່ຍິງທີ່ໄດ້ກວດ HIV ໃນເວລາມາກວດກ່ອນເກີດໃນໄລຍະຖືພາ |
|---|---|---|---|
| **ລະດັບຊາດ** | **0** | **1** | **6** |
| ນະຄອນຫລວງວຽງຈັນ | 1 | 2 | 30 |
| ຜົ້ງສາລີ | 0 | 0 | 0 |
| ຫຼວງນໍ້າທາ | 2 | 2 | 1 |
| ອຸດົມໄຊ | 1 | 1 | 1 |
| ບໍ່ແກ້ວ | 0 | 1 | 1 |
| ຫຼວງພະບາງ | 1 | 1 | 5 |
| ຫົວພັນ | 0 | 1 | 2 |
| ໄຊຍະບູລີ | 0 | 1 | 13 |
| ຊຽງຂວາງ | 1 | 3 | 7 |
| ວຽງຈັນ | 0 | 1 | 1 |
| ບໍລິຄໍາໄຊ | 0 | 1 | 3 |
| ຄໍາມ່ວນ | 0 | 1 | 1 |
| ສະຫວັນນະເຂດ | 0 | 1 | 6 |
| ສາລະວັນ | 0 | 0 | 2 |
| ເຊກອງ | 0 | 2 | 11 |
| ຈໍາປາສັກ | 0 | 1 | 6 |
| ອັດຕະປື | 0 | 1 | 1 |
| ໄຊສົມບູນ | 0 | 0 | 0 |

**ການກວດ HIV ໃນ 12 ເດືອນທີ່ຜ່ານມາ:** ອັດຕາສ່ວນຮ້ອຍຜູ້ທີ່ມີອາຍຸ 15-49 ປີ ທີ່ໄດ້ກວດ HIV ໃນ 12 ເດືອນຜ່ານມາ ແລະ ຮູ້ຜົນກວດ.
**ການກວດ HIV ໃນເວລາມາກວດກ່ອນເກີດໃນໄລຍະຖືພາ:** ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີ ໃນເວລາມາຮັບການບໍລິການດູແລກ່ອນເກີດ ໃນໄລຍະຖືພາຄັ້ງຫຼ້າສຸດຂອງເຂົາເຈົ້າ ໄດ້ຖືກສະເໜີໃຫ້ກວດເອສໄອວີ, ໄດ້ຍອມຮັບກວດ ແລະ ໄດ້ຮັບຜົນກວດ, ແລະໄດ້ຮັບຂໍ້ມູນຂ່າວສານສຸຂະສຶກສາ ຫຼື ຄໍາປຶກສາກ່ຽວກັບເອສໄອວີ ຫຼັງຈາກກວດ.

## ຂໍ້ຄວາມທີ່ສໍາຄັນ

- ເກືອບເຄິ່ງໜຶ່ງຂອງແມ່ຍິງໜຸ່ມ (45%) ແລະ ຊາຍໜຸ່ມ (47%) ອາຍຸ 15-24 ປີ ທີ່ມີລະດັບການສຶກສາສູງຮູ້ສອງວິທີປ້ອງກັນໂລກເອດສ, ພວກເຂົາ ຮູ້ວ່າຄົນທີ່ເບິ່ງຄືມີສຸຂະພາບແຂງແຮງດີ ອາດເປັນຄົນທີ່ຕິດເຊື້ອ HIV ໄດ້, ແລະ ປະຕິເສດຄວາມເຂົ້າໃຈຜິດທີ່ພົບເລື້ອຍທີ່ສຸດ 2 ປະການ. ໃນທາງກົງກັນຂ້າມ, ພົບວ່າ ແມ່ຍິງໜຸ່ມ (6%) ແລະ ຜູ້ຊາຍໜຸ່ມ (5%) ທີ່ບໍ່ມີການສຶກສາ ແມ່ນມີຄວາມຮູ້ດຽວກັນ.
- ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-49 ປີທີ່ໄດ້ກວດ HIV ໃນໄລຍະ 12 ເດືອນຜ່ານມາ ແມ່ນສູງກວ່າ ອັດຕາສ່ວນຂອງຜູ້ຊາຍທີ່ກວດ.
- 3 ແຂວງອັນດັບຕົ້ນໆ ທີ່ມີອັດຕາສ່ວນຮ້ອຍສູງສຸດ ຂອງແມ່ຍິງ ອາຍຸ 15-49 ປີ ໃນເວລາມາຮັບການບໍລິການດູແລກ່ອນເກີດ ໃນໄລຍະຖືພາຄັ້ງຫຼ້າສຸດຂອງເຂົາເຈົ້າ ໄດ້ຖືກສະເໜີໃຫ້ກວດເອສໄອວີ, ໄດ້ຍອມຮັບກວດ ແລະ ໄດ້ຮັບຜົນກວດ, ແລະໄດ້ຮັບຂໍ້ມູນຂ່າວສານສຸຂະສຶກສາ ຫຼື ຄໍາປຶກສາກ່ຽວກັບເອສໄອວີ ຫຼັງຈາກກວດ ແມ່ນ ນະຄອນຫຼວງວຽງຈັນ (30%), ໄຊຍະບູລີ (13%) ແລະ ເຊກອງ (11%).
- ອັດຕາສ່ວນຮ້ອຍຕໍ່າສຸດຂອງແມ່ຍິງ ອາຍຸ 15-49 ປີ ໃນເວລາມາຮັບການບໍລິການດູແລກ່ອນເກີດ ໃນໄລຍະຖືພາຄັ້ງຫຼ້າສຸດຂອງເຂົາເຈົ້າ, ໄດ້ຖືກສະເໜີໃຫ້ກວດເອສໄອວີ, ໄດ້ຍອມຮັບກວດ ແລະ ໄດ້ຮັບຜົນກວດ, ແລະໄດ້ຮັບຂໍ້ມູນຂ່າວສານສຸຂະສຶກສາ ຫຼື ຄໍາປຶກສາກ່ຽວກັບເອສໄອວີ ຫຼັງຈາກກວດ ແມ່ນແຂວງຜົ້ງສາລີ (0.3%), ໄຊສົມບູນ (0.3%) ແລະ ອັດຕະປື (0.7%).

# ພຶດຕິກຳທາງເພດ ຕາມລັກສະນະທີ່ສຳຄັນຕ່າງໆ

## ມີເພດສຳພັນ




ຢູ່ໃນຫຼາຍໆສະຖານະການ, ພຶດຕິກຳທາງເພດສາມາດຖືວ່າເປັນປັດໃຈສ່ຽງຕໍ່ບັນຫາສຸຂະພາບ ແລະ ສັງຄົມ. ຊຶ່ງເຫຼົ່ານີ້ລວມມີສຸຂະພາບຈະເລີນພັນ, HIV ແລະ ພະຍາດຕິດຕໍ່ທາງເພດສຳພັນອື່ນໆ, ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງ. ຄວາມເຂົ້າໃຈກ່ຽວກັບຮູບແບບພຶດຕິກຳທາງເພດຂອງປະຊາກອນສາມາດນຳໃຊ້ເຂົ້າໃນວຽກງານປ້ອງກັນພະຍາດ ແລະ ສົ່ງເສີມສຸຂະພາບ.

## ມີຄູ່ຮ່ວມເພດຫຼາຍຄົນ




## ໄວໜຸ່ມທີ່ມີເພດສຳພັນກ່ອນອາຍຸ 15 ປີ

ເດັກຊາຍໄວຈະເລີນພັນ & ຜູ້ຊາຍໜຸ່ມ ອາຍຸ 15-24 ປີ




ເດັກຍິງໄວຈະເລີນພັນ & ແມ່ຍິງໜຸ່ມ ອາຍຸ15-24 ປີ




## ການນຳໃຊ້ຖົງຢາງອະນາໄມ




## ເດັກຍິງອາຍຸ 15-19 ປີ ທີ່ລາຍງານວ່າເຄີຍຮ່ວມເພດກັບຄົນທີ່ມີອາຍຸ 10 ປີຫຼືຫຼາຍກວ່ານັ້ນ




**ມີເພດສຳພັນ**: ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະຜູ້ຊາຍອາຍຸ 15-24 ແລະ 15-49 ປີ ທີ່ມີການຮ່ວມເພດພາຍໃນ 12 ເດືອນທີ່ຜ່ານມາ.
**ມີຄູ່ຮ່ວມເພດຫຼາຍຄົນ**: ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະ ຜູ້ຊາຍອາຍຸ 15-24 ແລະ 15-49 ປີ ທີ່ມີເພດສຳພັນຫຼາຍກວ່າ 1 ຄົນໃນ 12 ເດືອນຜ່ານມາ.
**ການໃຊ້ຖົງຢາງອະນາໄມ**: ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະຜູ້ຊາຍ ອາຍຸ 15-24 ປີ ແລະ 15-49 ປີ ທີ່ມີຄູ່ຮ່ວມເພດສາພັນຫຼາຍກວ່າ 1 ຄົນໃນ 12 ເດືອນຜ່ານມາ ໄດ້ລາຍງານວ່າໄດ້ໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນຄັ້ງຫຼ້າສຸດ.
**ມີເພດສຳພັນກ່ອນອາຍຸ 15 ປີ**: ອັດຕາສ່ວນຮ້ອຍຂອງແມ່ຍິງ ແລະຜູ້ຊາຍອາຍຸ 15-24 ປີທີ່ມີເພດສຳພັນກ່ອນອາຍຸ 15 ປີ.
**ມີເພດສຳພັນກັບຜູ້ຊາຍອາຍຸ 10 ປີ ຫຼື ຫຼາຍກວ່ານັ້ນ**: ອັດຕາສ່ວນຮ້ອຍຂອງແມ່ຍິງໄວຈະເລີນພັນອາຍຸ 15-19 ປີທີ່ມີເພດສຳພັນໃນ 12 ເດືອນຜ່ານມາ ໄດ້ລາຍງານວ່າໄດ້ມີເພດສຳພັນກັບຜູ້ຊາຍອາຍຸ 10 ປີຫຼືຫຼາຍກວ່າ ໃນ 12 ເດືອນທີ່ຜ່ານມາ.
* ( ) ຕົວເລກທີ່ອີງໃສ່ 25-49 ກໍລະນີທີ່ບໍ່ໄດ້ຖ່ວງນ້ຳໜັກ.

# ຂໍ້ຄວາມສຳຄັນ

- 76% ຂອງແມ່ຍິງ ແລະ 79% ຂອງຜູ້ຊາຍທີ່ມີອາຍຸ 15-49 ປີແມ່ນມີເພດສຳພັນພາຍໃນ 12 ເດືອນທີ່ຜ່ານມາ.
- 52% ຂອງແມ່ຍິງໄວຈະເລີນພັນ ແລະ 49% ຂອງຜູ້ຊາຍໄວຈະເລີນພັນ ອາຍຸ 15-24 ປີແມ່ນມີເພດສຳພັນພາຍໃນ 12 ເດືອນທີ່ຜ່ານມາ.
- ປະມານ 4% ຂອງຜູ້ຊາຍອາຍຸ 15-24 ປີ ແລະ 4% ຂອງຜູ້ຊາຍອາຍຸ 15-49 ປີ ມີເພດສຳພັນກັບຫຼາຍກ່ວາ 1 ຄົນໃນ 12 ເດືອນທີ່ຜ່ານມາ.
- ການມີເພດກ່ອນອາຍຸ 15 ປີ ໃນເດັກຍິງໜຸ່ມ (6%) ອາຍຸ 15-24 ປີ ແມ່ນມີສູງກວ່າຂອງຊາຍໜຸ່ມ ສອງເທົ່າ (3%).
- ເກືອບ 1 ໃນ 10 ຂອງເດັກຍິງໄວຈະເລີນພັນ (9%) ອາຍຸ 15-19 ປີ ລາຍງານວ່າ ຄູ່ຮ່ວມເພດຂອງເຂົາເຈົ້າມີອາຍຸ 10 ປີ ຫຼື ຫຼາຍກວ່ານັ້ນ.
- 6 ໃນ 10 ຂອງແມ່ຍິງໜຸ່ມ (61%) ແລະ ຜູ້ຊາຍໜຸ່ມ (61%) ອາຍຸ 15-24 ປີ ທີ່ມີຄູ່ຮ່ວມເພດຫຼາຍກວ່າ 1 ຄົນໃນ 12 ເດືອນທີ່ຜ່ານມາ ໄດ້ລາຍງານວ່າໄດ້ນຳໃຊ້ຖົງຢາງອະນາໄມໃນຄັ້ງຫຼ້າສຸດ ທີ່ເຂົາເຈົ້າມີເພດສຳພັນ. ການນຳໃຊ້ຖົງຢາງອະນາໄມແມ່ນຕ່ຳກວ່າ ໃນກຸ່ມອາຍຸ 15-49 ປີ (ຜູ້ຊາຍ 44%, ແມ່ຍິງ 46%).

## ການນຳໃຊ້ຖົງຢາງອະນາໄມໃນໄວໜຸ່ມ

ໄວຈະເລີນພັນຊາຍ 15-19 ປີ




ຊາຍໜຸ່ມ 20-24 ປີ




ອັດຕາສ່ວນຮ້ອຍຂອງໄວໜຸ່ມ ແລະ ຊາວໜຸ່ມອາຍຸ 15-24 ປີ ທີ່ມີຄູ່ຮ່ວມເພດຫຼາຍກວ່າ 1 ຄົນໃນ 12 ເດືອນທີ່ຜ່ານມາ ລາຍງານວ່າມີການນຳໃຊ້ຖົງຢາງອະນາໄມ ເວລາມີເພດສຳພັນຄັ້ງຫຼ້າສຸດ.
* ( ) ຕົວເລກທີ່ອີງໃສ່ 25-49 ກໍລະນີທີ່ບໍ່ໄດ້ຖ່ວງນ້ຳໜັກ

## ການນຳໃຊ້ຖົງຢາງອະນາໄມກັບຄູ່ຮ່ວມເພດທີ່ບໍ່ປະຈຳໃນໄວໜຸ່ມ

ເດັກຊາຍໄວໜຸ່ມແລະຊາຍໜຸ່ມ ອາຍຸ 15-24 ປີ — ເດັກຍິງໄວໜຸ່ມແລະຍິງໜຸ່ມ ອາຍຸ 15-24 ປີ




ອັດຕາສ່ວນຮ້ອຍຂອງໄວໜຸ່ມ ແລະ ຊາວໜຸ່ມອາຍຸ 15-24 ປີທີ່ໄດ້ລາຍງານການໃຊ້ຖົງຢາງອະນາໄມໃນເວລາມີເພດສຳພັນຄັ້ງຫຼ້າສຸດກັບຄູ່ຮ່ວມເພດທີ່ບໍ່ໄດ້ແຕ່ງງານ, ບໍ່ຢູ່ຮ່ວມກັນໃນ 12 ເດືອນທີ່ຜ່ານມາ.

## ຕົວເລກຂັ້ນແຂວງກ່ຽວກັບພຶດຕິກຳທາງເພດ

| ແຂວງ | ໄວຈະເລີນພັນຊາຍ ແລະ ຊາຍໜຸ່ມ ອາຍຸ 15-24 ປີ | | ໄວຈະເລີນພັນຍິງ ແລະ ຍິງໜຸ່ມ ອາຍຸ 15-24 ປີ | |
|---|---|---|---|---|
| | ມີເພດສຳພັນກ່ອນອາຍຸ 15 ປີ | ມີຄູ່ຮ່ວມເພດຫລາຍຄົນ | ມີເພດສຳພັນກ່ອນອາຍຸ 15 ປີ | ມີຄູ່ຮ່ວມເພດຫລາຍຄົນ |
| **ລະດັບຊາດ** | 3 | 4 | 6 | 1 |
| ນະຄອນຫລວງວຽງຈັນ | 0 | 1 | 1 | 1 |
| ຜົ້ງສາລີ | 4 | 2 | 9 | 1 |
| ຫຼວງນ້ຳທາ | 14 | 12 | 9 | 0 |
| ອຸດົມໄຊ | 6 | 7 | 6 | 0 |
| ບໍ່ແກ້ວ | 2 | 4 | 7 | 1 |
| ຫຼວງພະບາງ | 6 | 17 | 8 | 1 |
| ຫົວພັນ | 12 | 2 | 11 | 0 |
| ໄຊຍະບູລີ | 1 | 3 | 11 | 0 |
| ຊຽງຂວາງ | 4 | 12 | 8 | 0 |
| ວຽງຈັນ | 2 | 4 | 7 | 1 |
| ບໍລິຄຳໄຊ | 3 | 3 | 8 | 1 |
| ຄຳມ່ວນ | 1 | 1 | 4 | 1 |
| ສະຫວັນນະເຂດ | 1 | 1 | 5 | 1 |
| ສາລະວັນ | 0 | 1 | 5 | 0 |
| ເຊກອງ | 1 | 3 | 7 | 1 |
| ຈຳປາສັກ | 0 | 1 | 2 | 0 |
| ອັດຕະປື | 2 | 3 | 3 | 0 |
| ໄຊສົມບູນ | 1 | 1 | 11 | 0 |

**ມີເພດສຳພັນກ່ອນອາຍຸ 15 ປີ:** ອັດຕາສ່ວນຮ້ອຍຂອງໄວຈະເລີນພັນ ແລະໄວໜຸ່ມອາຍຸ 15-24 ປີທີ່ມີການຮ່ວມເພດກ່ອນອາຍຸ 15 ປີ
**ມີເພດສຳພັນກັບຫຼາຍກວ່າ 1 ຄົນ:** ອັດຕາສ່ວນຮ້ອຍຂອງໄວຈະເລີນພັນ ແລະ ໄວໜຸ່ມອາຍຸ 15-24 ປີທີ່ມີເພດສຳພັນຫຼາຍກວ່າ 1 ຄົນ ໃນ 12 ເດືອນຜ່ານມາ.

## ມີເພດສຳພັນກ່ອນອາຍຸ 15 ປີ ໃນໄວໜຸ່ມຍິງ ແລະ ຍິງໜຸ່ມ ອາຍຸ 15-24 ປີ




ອັດຕາສ່ວນຮ້ອຍຂອງເດັກຍິງໄວຈະເລີນພັນ ແລະ ຍິງໜຸ່ມອາຍຸ 15-24 ທີ່ມີເພດສຳພັນກ່ອນອາຍຸ 15 ປີ

ການສຳຫຼວດດັດສະນີພາຍສັງຄົມລາວ ຄັ້ງທີ III (LSIS III) ໄດ້ຖືກຈັດຕັ້ງປະຕິບັດໃນ ປີ 2023 ໂດຍສູນສະຖິຕິແຫ່ງຊາດ. ການສຳຫຼວດນີ້ ເປັນສ່ວນໜຶ່ງຂອງ ໂຄງການການສຳຫຼວດ ແມ່ ແລະ ເດັກ (MICS) ສາກົນ ໂດຍໄດ້ຮັບການສະໜັບສະໜູນທາງດ້ານວິຊາການຈາກ ອົງການສະຫະປະຊາຊາດ ສຳລັບເດັກ (UNICEF). ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກລັດຖະບານແຫ່ງ ສປປ ລາວ, ອົງການ UNICEF, ອົງການ USAID, EUD, ລັດຖະບານອົດສະຕາລີ, ລັດຖະບານລຸກຊຳບວກ ແລະ ອົງການ UNFPA.

ຈຸດປະສົງໃນການກິດຈະກຳນີ້ແມ່ນ ເພື່ອເຜີຍແຜ່ຜົນການສຳຫຼວດທີ່ໄດ້ຄັດເລືອກ ຈາກການເຮັດການສຳຫຼວດຂອງ MICS ໃນ ສປປ ລາວ ປີ 2023 ທີ່ກ່ຽວຂ້ອງກັບ HIV & ພຶດຕິກຳທາງເພດ. ຂໍ້ມູນຈາກການສຳຫຼວດຄັ້ງນີ້ແມ່ນຈະສະແດງຢູ່ໃນຕາຕະລາງທີ TM.10.1M, TM.10.1W, TM.10.2M, TM.10.2W, TM.11.1M, TM.11.1W, TM.11.3M, TM.11.3W, TM.11.4M, TM.11.4W, TM.11.5, TM.11.6M and TM.11.6W ຂອງບົດລາຍງານການສຳຫຼວດສະບັບສົມບູນ.

ທ່ານສາມາດເບິ່ງຂໍ້ມູນເພີ່ມເຕີມ ບົດສະຫຼຸບຫຍໍ້ສະບັບອື່ນໆ ແລະ ບົດລາຍງານການສະຫຼວດສະບັບສົມບູນ ທີ່ເວັບໄຊ mics.unicef.org/surveys, www.unicef.org/lao, ແລະ www.lsb.gov.la